ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສານັກງານໃຫຍ່

ເລກທີ : 2398 /ທຄຕລ 2023

ນະຄອນຫລວງວຽງຈັນ, ວັນທີ: 03/07/2023

# ໜັງສືແຈ້ງເຊີນ

**ເຖິງ:** ບໍລິສັດ ບໍລິການສິ່ງພິມ ແລະ ບັນດາໂຮງພິມ ທີ່ນັບຖື.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນສິ່ງພິມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ຜະລິດ ສິ່ງພິມ ເພື່ອນໍາໃຊ້ ເຂົ້າໃນວຽກງານ ຂອງ ທຄຕລ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງລຸ່ມນີ້:

| ລາຍການ | ຈໍານວນ | ລາຍລະອຽດ |
|---|---|---|
| 1. ເຊືອກແດງມັດເງິນ | 1.700 ກໍ້ | - ເຊືອກສີແດງມັດເງິນ, ກວ້າງ 9 ມມ *ໜາ*0,9 ມມ, ພິມໜັງສື (BCEL) ສີຂາວ, ໜັກ 08 ກລ/ກໍ້, ແກນໄດ້ມາດຕະຖານ ທຄຕລ, ການຫຸ້ມຫໍ່: 02ກໍ້/ແພັກ ແລະ ລະບຸລາຍລະອຽດສິນຄ້າ ແລະ ຈໍານວນ, ສິນຄ້າ ຮັບປະກັນ 01 ປີ.<br>- **ໝາຍເຫດ : ການຈັດສົ່ງເຄື່ອງແມ່ນເປັນ 02 ຮອບ, ຮອບລະ 850 ກໍ້ ຫ່າງກັນ 04 ເດືອນ ຫຼັງຈາກສົ່ງຄັ້ງທີ 01 ແລະ ການຊໍາລະເງິນແມ່ນຕາມການຈັດສົ່ງແຕ່ລະຮອບ.** |
| 2. ເຈັຍເອຕິແກັດຕິດໂຄ້ນເງິນ ໃບ 500 ກີບ | 6 ຫໍ່ | - ເຈັຍເອຕິແກັດຕິດໂຄ້ນເງິນ, ເຈັຍກ່ອງແປ້ງ-ຫຼັງເທົາ 250gsm, ຂະໜາດ 15,6*6,8 ຊມ, ພິມ 1 ສີ 1 ໜ້າ, ການຫຸ້ມຫໍ່: 100 ໃບ/ຫໍ່, 5 ຫໍ່/ແພັກ ລາຍລະບຸລາຍອຽດທັງຈໍານວນ ແລະ ສິນຄ້າໃສ່ແຕ່ລະຫໍ່ ພ້ອມຕິດຕົວຢ່າງ, ສິນຄ້າຮັບປະກັນ 01 ປີ. |
| 3. ເຈັຍເອຕິແກັດຕິດໂຄ້ນເງິນ ໃບ 2.000 ກີບ | 6 ຫໍ່ | |
| 4. ເຈັຍເອຕິແກັດຕິດໂຄ້ນເງິນ ໃບ 1.000 ກີບ | 20 ຫໍ່ | - ເຈັຍເອຕິແກັດຕິດໂຄ້ນເງິນ, ເຈັຍກ່ອງແປ້ງ-ຫຼັງເທົາ 250gsm, ຂະໜາດ 15,6*6,8 ຊມ, ພິມ 1 ສີ 1 ໜ້າ, ການຫຸ້ມຫໍ່: 500 ໃບ/ຫໍ່, ລາຍລະບຸລາຍອຽດທັງຈໍານວນ ແລະ ສິນຄ້າໃສ່ແຕ່ລະຫໍ່ ພ້ອມຕິດຕົວຢ່າງ, ສິນຄ້າຮັບປະກັນ 01 ປີ. |
| 5. ເຈັຍເອຕິແກັດຕິດໂຄ້ນເງິນ ໃບ 50.000 ກີບ | 400 ຫໍ່ | |
| 6. ເຈັຍເອຕິແກັດຕິດໂຄ້ນເງິນ ໃບ 100.000 ກີບ | 400 ຫໍ່ | |
| 7. ເຈັຍກໍ້ຮູດ EDC S90 | 15.000 ກໍ້ | - ຂະໜາດ: ກວ້າງ 5,7ຊມ, ຜ່າສູນກາງ 3,7ຊມ, ຮູແກນ 1,2 ຊມ, ເຈັຍເທີມໍ 54gsm ພິມ 1 ສີ<br>- ການຫຸ້ມຫໍ່: 1 ແກັດ/100ກໍ້, ຕິດສິນຄ້າພ້ອມລາຍລະອຽດ |
| 8. ຊອງເຫຼືອງກາງ A4 | 100.000 ຊອງ | - ຂະໜາດ: 09 " * 12" x 3/4 ພິມ 04 ສີ 01 ໜ້າ<br>- ການຫຸ້ມຫໍ່: (50 ຊອງ/ແພັກ, 10 ແພັກ/ແກັດ), ພ້ອມລະບຸລາຍອຽດທັງຈໍານວນ ແລະ ສິນຄ້າໃສ່ແຕ່ລະແກັດ ພ້ອມຕິດຕົວຢ່າງ. |

ໝາຍເຫດ:

1. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ, ຄັດເລືອກຈາກຫຼາຍເງື່ອນໄຂ, ບໍ່ໄດ້ພິຈາລະນາພຽງແຕ່ມູນຄ່າຢ່າງດຽວ.
2. ສາມາດມາເບິ່ງຕົວຢ່າງສິນຄ້າ/ສິ່ງພິມ ໄດ້ ທີ່ ພະແນກຫ້ອງການບໍລິຫານ-ການເງິນ, ສໍານັກງານໃຫຍ່ ທຄຕລ, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

❖ **ເງື່ອນໄຂຂອງບໍລິສັດ, ໂຮງພິມພາກລັດ ແລະ ເອກະຊົນ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

➤ **ເອກະສານ ຊອງທີ 01:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດດ້ານສິ່ງພິມ, ດຳເນີນທຸລະກິດ ຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2022 ແລະ ຮ່າງແບບຟອມຂອງ ທຄຕລ ທີ່ຄັດຕິດມາພ້ອມນີ້ .
2. ກຳນົດຍື່ນລາຍລະອຽດຂ້າງເທິງ ສາມາດຍື່ນ ໄດ້ນັບຈາກ ວັນນີ້ ເຖິງ ວັນສຸກ ວັນທີ 14/07/2023 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ E-mail: procurement-@bcel.com.la ແລະ ສົ່ງສິນຄ້າຕົວຢ່າງ 1-2 ຢ່າງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C .

➤ **ເອກະສານ ຊອງທີ 02 (ປິດຊອງ):**

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນ ໄຂ ຮອບທີ 01ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມ ໃນວັນສຸກ, ທີ 28/07/2023 ເວລາ 9:00 ໂມງ ທີ່ ຊັ້ນ 05, ອາຄານ C.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວພ້ອມ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.

**ໝາຍເຫດ:**

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
2. ການຊຳລະແມ່ນ ຈ່າຍເງິນ ຕາມມູນຄ່າສັ່ງຊື້ແຕ່ລະລາຍການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ມີຄວາມສົນໃຈ ຍື່ນຊອງເຂົ້າຮ່ວມການປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**

ສາຍຈິດ ສີມມະວົງ

ເບີໂທປະສານງານ: 021 213 200-414